ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

<u>ອົງການອະທິໄອຍະການ</u> /ລທ 9 /ອທກ.

<u>ປະຊາຊົນແຫ່ງ ສປປລ.</u>

<u>ຄຳ ສັ່ງ ແນະ ນຳ</u>

ເຖິງ ບັນດາໄອຍະການປະຊາຊົນແຂວງ,ກຳແພງນະຄອນແລະເມືອງ ໃນທົ່ວປະເທດ.

<u>ເລື່ອງ</u>: ການນຳໃຊ້ມາດຕາ 162 ກ່ຽວກັບການບໍ່ປະຕິບັດຄຳຕັດສິນຫລືຄຳສັ່ງ ຂອງສານ .

ໄດ້ສັງເກດເຫັນວ່າໃນໄລຍະຜ່ານມາບັນດາໄອຍະການປະຊາຊົນແລະສານໄດ້ ປະຕິບັດມາດຕາ 162ກົດໝາຍອາຍາຍັງບໍ່ທັນຖືກຕ້ອງດີ ໃນເມື່ອລູກຄວາມບໍ່ຍອມປະຕິບັດຕາມຄຳຕັດສິນຫລືຄຳສັ່ງຂອງສານແລ້ວກໍ່ສົ່ງສຳນວນຄະດີໃຫ້ໄອຍະການດຳເນີນການກັກຂັງລູກຄວາມນັ້ນໂລດໂດຍ ສະເພາະແມ່ນໃນເວລາປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດແລ້ວ. ການປະຕິບັດຄຳຕັດສິນ ຂອງສານທີ່ໃຊ້ໄດ້ເດັດຂາດແລ້ວແມ່ນໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານຢູ່ໃຕ້ການນຳພາແລະກວດກາຂອງປະທານສານບ່ອນຜູ້ກ່ຽວສັງກັດຢູ່(ມາດຕາ 35 ກົດໝາຍວ່າດ້ວຍສານປະຊາຊົນ) ສ່ວນໄອຍະການປະຊາຊົນມີໜ້າທີ່ຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານໂດຍພະນັກງານປະຕິບັດຄຳຕັດສິນຂອງສານຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 16 ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ. ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງປະຕິບັດຕາມມາດຕາ 81ແລະ82 ກົດໝາຍດຳເນີນຄະດີແພ່ງເສັຽກ່ອນ. ຖ້າຫາກພະນັກງານປະຕິບັດຄຳຕັດສິນຂອງສານໄດ້ປະຕິບັດຕາມມາດຕາ 82 ກົດໝາຍດຳເນີນຄະດີແພ່ງສຸດຄວາມສາມາດແລ້ວ ແຕ່ລູກຄວາມດື້ດ້ານບໍ່ຍອມປະຕິບັດ ພະນັກງານປະຕິບັດຄຳຕັດສິນຂອງສານກໍ່ເຮັດຈົດໝາຍບັນທຶກບອກວ່າລູກຄວາມບໍ່ສົນຍອມປະຕິບັດແລ້ວລາຍງານໃຫ້ປະທານສານເພື່ອພິຈາລະນາ. ຖ້າປະທານສານເຫັນວ່າມີຄວາມຈຳເປັນຕ້ອງບັງຄັບໃຫ້ລູກຄວາມປະຕິບັດຄຳຕັດສິນຂອງສານໂດຍນຳໃຊ້ມາດຕາ 162 ກົດໝາຍອາຍາແລ້ວ ປະທານສານກໍ່ເຮັດຄຳສະເໜີໃຫ້ໄອຍະການປະຊາຊົນ ເພື່ອສັ່ງຟ້ອງລູກຄວາມຜູ້ນັ້ນໃຫ້ສານຕັດສິນລົງໂທດລູກຄວາມນັ້ນຕາມມາດຕາ 162 ກົດໝາຍອາຍາ

ວຽງຈັນ,ວັນທີ່ 30 ພະຈິກ 1992

ອົງການອະທິໄອຍະການປະຊາຊົນ ສປປລ

ອະທິໄອຍະການ

ພາຍ ຊູລາ